**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້

ກົມກວດກາປ່າໄມ້

ເລກທີ..3.0.1.5.../ກກປມ

ນະຄອນຫຼວງວຽງຈັນ, ວັນທີ..27....ທັນວາ.2022

# ຂໍ້ຕົກລົງ

## ວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້

## ບົດແນະນຳ ການເພີ່ມທະວີການປະສານງານ ແລະ ການຮ່ວມມືໃນການແກ້ໄຂບັນຫາ ອາຊະຍາກຳ ສັດນ້ຳ, ສັດປ່າ ແລະ ປ່າໄມ້ ຂອງເຄືອຂ່າຍບັງຄັບໃຊ້ກົດໝາຍວ່າດ້ວຍ ສັດນ້ຳ ແລະ ສັດປ່າ, ແລະ ກົດໝາຍວ່າດ້ວຍ ປ່າໄມ້

- ອີງຕາມ ກົດໝາຍວ່າດ້ວຍ ສັດນ້ຳ ແລະ ສັດປ່າ ເລກທີ 07/ສພຊ, ລົງວັນທີ 24 ທັນ 2007;
- ອີງຕາມ ກົດໝາຍວ່າດ້ວຍ ປ່າໄມ້ ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ເລກທີ 2239/ກປ, ລົງວັນທີ 30 ພະຈິກ 2020 ວ່າດ້ວຍ ການແຕ່ງຕັ້ງຄະນະຊີ້ນຳ ແລະ ຄະນະປະສານງານ ເຄືອຂ່າຍບັງຄັບໃຊ້ກົດໝາຍວ່າດ້ວຍ ສັດນ້ຳ ແລະ ສັດປ່າ ແລະ ກົດໝາຍວ່າດ້ວຍ ປ່າໄມ້;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ເລກທີ 1223/ກປ, ລົງວັນທີ 10 ຕຸລາ 2021 ວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້ ຄູ່ມື ການຈັດຕັ້ງປະຕິບັດວຽກງານ ເຄືອຂ່າຍການບັງຄັບໃຊ້ກົດໝາຍ ວ່າດ້ວຍ ສັດນ້ຳ ແລະ ສັດປ່າ ແລະ ກົດໝາຍວ່າດ້ວຍ ປ່າໄມ້ (LAO-WEN).

**ຫົວໜ້າກົມກວດກາປ່າໄມ້/ຫົວໜ້າຄະນະຊີ້ນຳ LAO-WEN ອອກຂໍ້ຕົກລົງ:**

**ມາດຕາ 1** ຮັບຮອງ ແລະ ປະກາດໃຊ້ **"ບົດແນະນຳ ການເພີ່ມທະວີການປະສານງານ ແລະ ການຮ່ວມມື ໃນການແກ້ໄຂບັນຫາ ອາຊະຍາກຳ ສັດນ້ຳ, ສັດປ່າ ແລະ ປ່າໄມ້ ຂອງເຄືອຂ່າຍບັງຄັບໃຊ້ກົດໝາຍວ່າດ້ວຍ ສັດນ້ຳ ແລະ ສັດປ່າ ແລະ ກົດໝາຍວ່າດ້ວຍ ປ່າໄມ້".**

**ມາດຕາ 2** ມອບໃຫ້ຄະນະປະສານງານ ເຄືອຂ່າຍບັງຄັບໃຊ້ກົດໝາຍວ່າດ້ວຍ ສັດນ້ຳ ແລະ ສັດປ່າ ແລະ ກົດໝາຍ ວ່າດ້ວຍ ປ່າໄມ້ ເປັນເຈົ້າການປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ເພື່ອ ຈັດຕັ້ງປະຕິບັດ ບົດແນະນຳດັ່ງກ່າວ ໃຫ້ປະກົດຜົນເປັນຈິງ.

**ມາດຕາ 3** ເຄືອຂ່າຍບັງຄັບໃຊ້ກົດໝາຍວ່າດ້ວຍ ສັດນ້ຳ ແລະ ສັດປ່າ ແລະ ກົດໝາຍວ່າດ້ວຍ ປ່າໄມ້ ທຸກຂັ້ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ.

**ມາດຕາ 4** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າກົມ**

**ຫົວໜ້າຄະນະຊີ້ນຳ LAO-WEN**

ສົມພອນ ແກ້ວຫາວົງ

Scanned with CamScanner